ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------

ກະຊວງສາທາລະນະສຸກ . ເລກທີ 2581 / ກຊສ

ນະຄອນຫຼວງວຽງຈັນ, ວັນທີ 12 ພະຈິກ 2003

# ຂໍ້ກຳນົດ ວ່າດ້ວຍການຄຸ້ມຄອງ
# ການໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດ

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 01/ສພຊ, ລົງວັນທີ 8 ເມສາ 2000.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ່ 020/ນຍ ລົງວັນທີ19/3/99 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ.
- ອີງຕາມ ການສະເໜີຂອງກົມອາຫານ ແລະ ຢາ.

## ລັດຖະມົນຕີວ່າການກະຊວງສາທາລະນະສຸກອອກຂໍ້ກຳນົດ :

## ໝວດທີ 1

## ຫຼັກການລວມ

**ມາດຕາ 1. ຈຸດປະສົງ ແລະ ຄາດໝາຍ:**

**1 ຈຸດປະສົງ:**

- ເພື່ອຄຸ້ມຄອງບັນດາຫົວໜ່ວຍທຸລະກິດດ້ານອາຫານ, ຢາ ແລະ ຜະລິດຕະພັນການແພດ ທັງພາກລັດ ແລະ ເອກະຊົນ ໃຫ້ປະຕິບັດຕາມກົດຫມາຍ ແລະ ລະບຽບ ທີ່ທາງການປະກາດໃຊ້.
- ເພື່ອປົກປ້ອງຜູ້ບໍລິໂພກໃຫ້ໄດ້ຮັບແຕ່ອາຫານ, ຢາ ແລະ ຜະລິດຕະພັນການແພດທີ່ມີຄຸນນະພາບ ແລະ ມີຄວາມປອດໄພ.
- ເພື່ອສະຫນອງຂໍ້ມູນຂ່າວສານອັນຈຳເປັນຖືກຕ້ອງ ແລະ ແທດເຫມາະກັບສະພາບຕົວຈິງ.

**2. ຄາດຫມາຍ:**

- ເຮັດໃຫ້ບັນດາບໍລິສັດທີ່ດຳເນີນທຸລະກິດດ້ານອາຫານ ແລະ ຢາເຄື່ອນໄຫວຖືກຕ້ອງ ແລະ ບັນລຸຕາມມາດຕະຖານ ທີ່ທາງການວາງອອກ.
- ເຮັດໃຫ້ການຄຸ້ມຄອງ, ການສະໜອງຂໍ້ມູນ ແລະ ການຕິດຕາມກວດກາ ການເຜີຍແຜ່ ແລະ ການໂຄສະນາອາຫານ ແລະ ຢາໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ມາດຕາ 2. ນິຍາມ.**

1. **ອາຫານ:** ແມ່ນວັດຖຸໃດໜຶ່ງທີ່ຍັງດິບ ຫຼື ໄດ້ປຸງແຕ່ງເຄິ່ງສຳເລັດຮູບ ແລະ ສຳເລັດຮູບ, ຊຶ່ງມີຈຸດປະສົງເພື່ອການບໍລິໂພກຂອງມະນຸດ, ລວມທັງເຄື່ອງດື່ມ, ຂະໜົມຄ້ຽວ(ຊິງໂກມ) ແລະ ວັດຖຸໃດໜຶ່ງຖືກນຳໃຊ້ເຂົ້າໃນການຜະລິດ, ການປຸງແຕ່ງ ຫຼື ຜ່ານການດັດແປງດ້ວຍວິທີການ ໃດໜຶ່ງແຕ່ບໍ່ໄດ້ກວມເອົາ ເຄື່ອງສຳອາງ, ຢາສູບ ຫຼື ສານຕ່າງໆ ທີ່ໃຊ້ເປັນຢາ ;
2. **ຢາ:** ແມ່ນວັດຖຸຢ່າງໜຶ່ງ ຫຼື ວັດຖຸປະກອບຫຼາຍຢ່າງທີ່ອອກລິດ ແລະບໍ່ອອກລິດປະສົມເຂົ້າກັນ ທີ່ນຳໃຊ້ ສຳລັບກັນ ແລະປິ່ນປົວພະຍາດ, ຊ່ວຍໃນການພິສູດ ແລະບົ່ງມະຕິພະຍາດ, ບັນເທົາອາການເຈັບປວດ, ດັດແກ້ປັບປຸງ,ເຊີດຊູບຳລຸງຮັກສາ ຫຼື ປ່ຽນແປງໜ້າທີ່ການຂອງຮ່າງກາຍ,ຟື້ນຟູສຸຂະພາບກາຍ ແລະຈິດໃຈຂອງຄົນ ;

3. **ຜະລິດຕະພັນການແພດ:** ແມ່ນວັດຖຸໃດໜຶ່ງທີ່ມີການນໍາໃຊ້ເຂົ້າໃນວົງການແພດ ລວມທັງຜະລິດຕະພັນໃດໜຶ່ງທີ່ນໍາໃຊ້ທົ່ວໄປໃນສັງຄົມ ຊຶ່ງສາມາດເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ ເຊັ່ນ: ອາຫານເສີມການແພດ, ເຄື່ອງສໍາອາງ(ໂກສະເມຕິກ) ແລະ ອື່ນໆ...

## ໝວດທີ 2

## ການຄຸ້ມຄອງການເຜີຍແຜ່

**ມາດຕາ 3.** ທຸກການເຜີຍແຜ່ເພື່ອສົ່ງເສີມກິດຈະກໍາຕ່າງໆ ຂອງຜູ້ດໍາເນີນທຸລະກິດຕ້ອງໄດ້ຮັບການກວດກາ, ຄຸ້ມ ຄອງດ້ານເນື້ອໃນ ແລະ ຮູບການຈາກເຈົ້າໜ້າທີ່ອາຫານແລະຢາ ແລະ ຂະແໜງການ ທີ່ກ່ຽວຂ້ອງແຕ່ ລະຂັ້ນ ເພື່ອແນໃສ່ຮັບປະກັນໃຫ້ຜູ້ບໍລິໂພກອາຫານ, ຢາ ແລະ ຜະລິດຕະພັນການແພດ ໃຫ້ມີການນໍາໃຊ້ຢ່າງສົມເຫດສົມຜົນ ແລະ ມີຄວາມປອດໄພ.

**ມາດຕາ 4. ຮູບແບບການເຜີຍແຜ່**

1. ຈັດສໍາມະນາ, ຝຶກອົບຮົມ, ກອງປະຊຸມວິທະຍາສາດ ຫຼື ກອງປະຊຸມວິຊາການ ;
2. ເຜີຍແຜ່ ຜ່ານສື່ມວນຊົນຕ່າງໆ ເຊັ່ນ: ວິທະຍຸ, ໂທລະພາບ, ວີດີໂອ, ເທບ, ປຶ້ມ, ຫນັງສືພິມ,ວາລະສານ, ແຜ່ນພັບ, ໂປສະເຕີ້, ສະຕິກເກີ້ , ຈັດວາງສະແດງຕ່າງໆ, ຕະຫລາດນັດ ແລະ ອື່ນໆ.

## ໝວດທີ 3

## ການຄຸ້ມຄອງການໂຄສະນາ

**ມາດຕາ 5.** ທຸກການໂຄສະນາເພື່ອສົ່ງເສີມຜະລິດຕະພັນຕ່າງໆ ຂອງຜູ້ດໍາເນີນທຸລະກິດ ຕ້ອງໄດ້ຮັບການກວດ ກາ, ຄຸ້ມຄອງດ້ານເນື້ອໃນ ແລະ ຮູບການຈາກເຈົ້າໜ້າທີ່ອາຫານແລະຢາ ແລະ ຂະແໜງການທີ່ກ່ຽວຂ້ອງ ແຕ່ລະຂັ້ນ.

**ມາດຕາ 6.** ບຸກຄົນ ຫຼື ນິຕິບຸກຄົນໃດຫນຶ່ງ ທີ່ດໍາເນີນທຸລະກິດ ດ້ານອາຫານ, ຢາ ແລະ ຜະລິດຕະພັນການແພດ ຕ້ອງຮັບຜິດຊອບຕໍ່ຂໍ້ຄວາມ ແລະ ເນື້ອໃນດ້ານອາຫານ, ຢາ ແລະ ຜະລິດຕະພັນການແພດ, ຫຼີກເວັ້ນຄໍາເວົ້າທີ່ມີລັກສະນະຊວນເຊື່ອເກີນຄວາມເປັນຈິງ.

## ໝວດທີ 4

## ຜູ້ມີສິດຂໍອະນຸຍາດເຜີຍແຜ່ ຫລື ໂຄສະນາ

**ມາດຕາ 7.** ຜູ້ມີສິດຂໍອະນຸຍາດເຜີຍແຜ່ ຫຼື ໂຄສະນາດ້ານອາຫານ, ຢາ ແລະຜະລິດຕະພັນການແພດ ຕ້ອງແມ່ນ ບໍລິສັດຂາອອກ-ຂາເຂົ້າ, ໂຮງງານ ຫຼື ຕົວແທນຈໍາຫນ່າຍທີ່ໄດ້ຮັບອະນຸຍາດ ໃຫ້ດໍາເນີນທຸລະກິດຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການຕ່າງໆ ຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 8.** ຖ້າເປັນຜະລິດຕະພັນໃຫມ່ ແລະ ບໍ່ເຄີຍຈໍາຫນ່າຍຢູ່ໃນ ສປປ ລາວ ແຕ່ຕ້ອງການເຜີຍແຜ່ ຫຼື ໂຄສະນາ ຕ້ອງມີໃບຢັ້ງຢືນຮັບຮອງຄຸນນະພາບ ຫລື ໃບອະນຸຍາດຈໍາຫນ່າຍຈາກອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ຂອງປະເທດຜູ້ຜະລິດ.

## ຫມວດທີ 5

## ຂັ້ນຕອນ ແລະ ການປະກອບເອກະສານເພື່ອຂໍອະນຸຍາດ ເຜີຍແຜ່ ຫລື ໂຄສະນາ

**ມາດຕາ 9. ຂັ້ນຕອນໃນການຂໍອະນຸຍາດ**

ບຸກຄົນ ຫຼື ນິຕິບຸກຄົນໃດຫນຶ່ງ ທີ່ມີຈຸດປະສົງຢາກຂໍເຜີຍແຜ່ ຫຼື ໂຄສະນາດ້ານຜະລິດຕະພັນອາຫານ, ຢາ ຫຼື ຜະລິດຕະພັນການແພດ ຕ້ອງປະຕິບັດດັ່ງນີ້ :

1. ສໍາລັບບໍລິສັດ ຫຼື ໂຮງງານທີ່ມີການລົງທຶນ ຫຼື ຮ່ວມມືກັບຕ່າງປະເທດ ໃຫ້ປະກອບເອກະສານຕາມມາດຕາ 10 ຂອງຂໍ້ກໍານົດສະບັບນີ້ ແລ້ວຍື່ນຜ່ານຫ້ອງການສາທາລະນະສຸກເມືອງ ແລະ ແຂວງຕາມລໍາດັບບ່ອນທີ່ບໍລິສັດ ຫຼື ໂຮງງານຕັ້ງຢູ່ , ແລ້ວນໍາສົ່ງກົມອາຫານ ແລະ ຢາເພື່ອພິຈາລະນາອະນຸມັດ.

2. ສໍາລັບບໍລິສັດ ຫຼື ໂຮງງານທີ່ມີການລົງທຶນຈາກພາຍໃນປະເທດ ໃຫ້ປະກອບເອກະສານຕາມມາດຕາ 10 ຂອງຂໍ້ກຳນົດສະບັບນີ້ , ແລ້ວຍື່ນຜ່ານຫ້ອງການສາທາລະນະສຸກເມືອງບ່ອນທີ່ບໍລິສັດ ຫຼື ໂຮງງານຕັ້ງຢູ່ ແລ້ວນຳສົ່ງພະແນກສາທາລະນະສຸກແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດເພື່ອພິຈາລະນາອະນຸມັດ.

**ມາດຕາ 10. ການປະກອບເອກະສານເພື່ອຂໍອະນຸຍາດ**

ບັນດາເອກະສານຕ່າງໆເພື່ອຂໍອະນຸຍາດເຜີຍແຜ່ ຫຼື ໂຄສະນາ ຕ້ອງປະກອບດ້ວຍ:

1. ສໍາລັບຈັດສຳມະນາ, ຝຶກອົບຮົມ, ຈັດກອງປະຊຸມວິຊາການ, ການວາງສະແດງ ແລະ ອື່ນໆ
   - ໃບຄໍາຮ້ອງຕາມແບບຟອມຂອງກົມອາຫານ ແລະ ຢາ
   - ໃບຮັບຮອງຄຸນນະພາບ ຫຼື ໃບອະນຸຍາດຈໍາໜ່າຍຈາກອົງການຈັດຕັ້ງ ຂອງລັດຂອງປະເທດຜູ້ຜະລິດ
   - ແຈ້ງລາຍການຜະລິດຕະພັນ ຫລື ສິ່ງພິມພ້ອມດ້ວຍຈຳນວນແລະ ມູນຄ່າ
   - ເນື້ອໃນເອກະສານ ຫລື ບົດຄວາມກ່ຽວກັບຜະລິດຕະພັນ 03 ສະບັບ ( ເປັນພາສາລາວ, ຝະລັ່ງ ຫລື ອັງກິດ )
   - ຕົວແບບ ຫຼືຕົວຢ່າງຜະລິດຕະພັນທີ່ຈະມາເຜີຍແຜ່ທີ່ບັນຈຸໃນຫົວໜ່ວຍນ້ອຍສຸດ 02ຕົວຢ່າງ
   - ປະຫວັດຫຍໍ້ຂອງວິທະຍາກອນ
   - ແຈ້ງເປົ້າໝາຍ ແລະ ຈຳນວນຜູ້ທີ່ຈະເຂົ້າຮ່ວມ
2. ສໍາລັບຜ່ານສື່ມວນຊົນຕ່າງໆເຊັ່ນ: ວິທະຍຸ, ໂທລະພາບ, ວີດີໂອ,ໂທລະໂຄ່ງ. ນອກຈາກປະກອບເອກະສານຕາມທີ່ກ່າວໄວ້ໃນ ມາດຕາ 10.1 ຕ້ອງໄດ້ປະກອບ :
   - ໃບຢັ້ງຢືນການຂຶ້ນທະບຽນ 03 ສະບັບ
3. ສໍາລັບຜ່ານສິ່ງພິມຕ່າງໆເຊັ່ນ : ໜັງສືພິມ, ວາລະສານ, ສະຕິກເກີ, ໂປສະເຕີ, ປຶ້ມ, ປະຕິທິນ, ປ້າຍ ແລະ ອຸປະກອນຕ່າງໆ. ນອກຈາກປະກອບເອກະສານຕາມທີ່ກ່າວໄວ້ໃນ ມາດຕາ 10.1 ແລະ 10.2ຕ້ອງໄດ້ປະກອບ:
   - ຮ່າງສິ່ງພິມທີ່ຈະພິມນັ້ນມາຜ່ານ

**ມາດຕາ 11. ອາຍຸການຂອງການໂຄສະນາ**

1. ສໍາລັບຜ່ານສິ່ງພິມຕ່າງໆ (ຍົກເວັ້ນສະຕິກເກີ) ເຊັ່ນ: ປ້າຍ, ໂປສະເຕີ້, ແຜ່ນພັບ, ປຶ້ມ, ປະຕິທິນ ແລະອຸປະກອນອື່ນໆ... ແມ່ນມີອາຍຸການໂຄສະນາ 1 ປີ.
2. ສໍາລັບການໂຄສະນາຜ່ານສື່ມວນຊົນ ແລະ ສະຕິກເກີ ແມ່ນມີອາຍຸການໂຄສະນາ 3 ເດືອນ.

## ໝວດທີ 6
## ນະໂຍບາຍ, ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 12. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ ຫຼື ນິຕິບຸກຄົນຫາກເຜີຍແຜ່ ຫຼື ໂຄສະນາຜະລິດຕະພັນອາຫານ, ຢາ ຫຼື ຜະລິດຕະພັນການແພດຖືກຕ້ອງຕາມລະບຽບການຈະຖືກຍ້ອງຍໍຢ່າງເໝາະສົມ ຈາກພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 13. ຂໍ້ຫ້າມ**

1. ຫ້າມທຸກໆ ຮູບແບບການເຜີຍແຜ່ ຫຼື ໂຄສະນາຜະລິດຕະພັນອາຫານ, ຢາ ຫຼື ຜລິດຕະພັນການແພດທີ່ບໍ່ໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ.
2. ຫ້າມການເຜີຍແຜ່ ຫຼື ໂຄສະນາຢາ ແລະ ຜະລິດຕະພັນການແພດ ດ້ວຍຮູບແບບການຈົກສະຫຼາກ, ຊິງໂຊກ ແລະ ແຂ່ງຂັນໃຫ້ລາງວັນອື່ນໆ.

**ມາດຕາ 14. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງຫາກລະເມີດຕໍ່ມາດຕາ 13.1 ແລະ 13.2 ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ຄັ້ງທີ 1 : ກ່າວເຕືອນແລະສຶກສາອົບຮົມພ້ອມທັງຂຽນໃບປະຕິຍານຕົນ.
- ຄັ້ງທີ 2 : ປັບໃໝ 1.500.000 ກີບ.
- ຄັ້ງທີ 3 : ຕັດສິດໂຄສະນາຂອງບໍລິສັດ ແລະ ປັບໃໝ 3.000.000 ກີບ.

## ໝວດທີ 7
## ການຈັດຕັ້ງປະຕິບັດ

**ມາດຕາ 15.** ມອບໃຫ້ກົມອາຫານ ແລະ ຢາ ຜັນຂະຫຍາຍໃຫ້ເປັນລະອຽດ ແລະຈັດຕັ້ງປະຕິບັດຂໍ້ກໍານົດສະບັບນີ້ ໂດຍສົມທົບກັບ ພະແນກສາທາລະນາສຸກແຂວງ, ນະຄອນຫຼວງວຽງຈັນ, ເຂດພິເສດແລະ ບັນດາຂະແໜງການອື່ນໆທີ່ກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ.

**ມາດຕາ 16.** ຂໍ້ກໍານົດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນກົດລະບຽບໃນການອະນຸຍາດໂຄສະນາສະບັບເລກທີ 3226/ກຊສ, ລົງວັນທີ 27/9/1997.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ດຣ. ປອນເມກ ດາລາລອຍ